# ໂຄງການໂດຍສັງເຂບ

## ສັງເຂບ ໂຄງການ

- ຊື່ໂຄງການ

"ໂຄງການ ຍົກລະດັບ ຄວາມສາມາດ ໃນການຄຸ້ມຄອງ ແຜນງານ ການລົງທຶນຂອງລັດ ສປປ ລາວ (ພີແຄັບ2)"

- ປະເທດ: ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
- ການຕົກລົງ ໄດ້ຮັບການເຊັນຮັບຮອງ: ໃນວັນທີ່ 14 ຕຸລາ 2007
- ທີ່ຕັ້ງຂອງໂຄງການ: ທົ່ວປະເທດ
- ໄລຍະໂຄງການ: ເດືອນ 3 2008 ເຖິງ ເດືອນ 8 2011 (3 ປີ 5 ເດືອນ)
- ອົງການຈັດຕັ້ງຄູ່ຮ່ວມງານ: ກະຊວງ ແຜນການ ແລະ ການລົງທຶນ
- ຄວາມເປັນມາຂອງໂຄງການ

ພາຍໃຕ້ ແຜນງານການລົງທຶນຂອງລັດ (PIP), ແຜນໂຄງການການລົງທຶນຂອງລັດ ໃນ ສປປ ລາວ ນັ້ນ, ແຕ່ລະໂຄງການຕ່າງໆ ບໍ່ໄດ້ມີການຈັດຕັ້ງປະຕິບັດ ຢ່າງມີປະສິດທິຜົນ ແລະ ຢ່າງມີປະສິດທິພາບ, ຍ້ອນວ່າ ບໍ່ມີ ວິທີການຄຸ້ມຄອງທີ່ເປັນແບບດຽວກັນໃນ ຂັ້ນຕອນຕ່າງໆ ຂອງການວາງແຜນ, ການຕິດຕາມກວດກາ ແລະ ການປະເມີນຜົນ. ອີງໃສ່ການຮ້ອງຂໍຈາກ ລັດຖະບານ ສປປ ລາວ ມາຍັງລັດຖະບານ ປະເທດຍີ່ປຸ່ນ, ການຮ່ວມມື ທາງດ້ານວິຊາການ ອົງການຮ່ວມມືສາກົນ ໄຈກາ ເຊິ່ງແມ່ນ "ໂຄງການ ເສີມສ້າງຄວາມສາມາດ ໃນການຄຸ້ມຄອງ ແຜນງານການລົງທຶນຂອງລັດ (ພີແຄັບ 1)" ໄດ້ຮັບການຈັດຕັ້ງປະຕິບັດ ຈາກ ເດືອນ ພະຈິກ ປີ 2004 ເຖິງ ເດືອນ ຕຸລາ ປີ 2007, ເພື່ອພັດທະນາ ບັນດາວິທີ ດັ່ງກ່າວ ໃນແຕ່ລະ ຂັ້ນຕອນການຄຸ້ມຄອງ, ແລະ ເສີມສ້າງ ຄວາມສາມາດ ໃຫ້ກັບພະນັກງານ ທີ່ກ່ຽວຂ້ອງ.

ພາຍຫຼັງ ໄດ້ຮັບຜົນສຳເລັດ ໃນການຈັດຕັ້ງປະຕິບັດ ພີແຄັບ 1, ລັດຖະບານ ສປປ ລາວ ໄດ້ຮ້ອງຂໍການສືບຕໍ່ຮ່ວມມືຈາກ ອົງການຮ່ວມມືສາກົນ ໄຈກາ ເພື່ອສ້າງຄວາມເຂັ້ມແຂງ ໃຫ້ແກ່ ວິທີການຄຸ້ມຄອງ PIP. ອີງໃສ່ການຮ້ອງຂໍດັ່ງກ່າວ, ອົງການຮ່ວມມືສາກົນ ໄຈກາໄດ້ຕົກລົງເຫັນດີ ຈັດຕັ້ງປະຕິບັດ ໄລຍະທີ່ 2 ຂອງ ພີແຄັບ (ພີແຄັບ 2).

- ຈຸດປະສົງ ໂຄງການ:

ກະຊວງ ແຜນການ ແລະ ການລົງທຶນ ແລະ ແຜນການ ແລະ ການລົງທຶນແຂວງ ຈະສາມາດ ດຳເນີນ ບັນດາໂຄງການ PIP ໂດຍຜ່ານ ຂັ້ນຕອນ ການປະເມີນແບບໃໝ່ ທີ່ໄດ້ສະເໜີຂຶ້ນຈາກໂຄງການ ພາຍໃຕ້ ເພດານງົບປະມານທີ່ມີຄວາມເຄັ່ງຄັດ., ແລະ ມີການຈັດຕັ້ງປະຕິບັດ ການຕິດຕາມກວດກາ ແລະ ປະເມີນຜົນ.

- ເປົ້າໝາຍລວມ:

ບັນດາກະຊວງຕ່າງໆ ແລະ ພະແນກການອ້ອມຂ້າງກະຊວງ ຈະສາມາດ ຈັດຕັ້ງປະຕິບັດ ບັນດາໂຄງການ PIP ຢ່າງມີປະສິດທິພາບ ແລະ ປະສິດທິຜົນ ໄປຕາມແຜນເວລາ ແລະ ສອດຄ່ອງກັບແຜນການນຳໃຊ້ງົບປະມານ ພາຍໃຕ້ ແຜນງານ ຂອງຂະແໜງການ ທີ່ໄດ້ຮັບການປັບປຸງ.

## ແນວຄວາມຄິດ ຂອງການດຳເນີນການ

ພີແສັບ 2 ໄດ້ຈັດຕັ້ງປະຕິບັດ ກິດຈະກຳຕ່າງໆ ໂດຍຈັດ ບັນດາແນວຄວາມຄິດ ໃຫ້ເຂົ້າກັນ ດັ່ງຕໍ່ໄປນີ້ .

(1) ການຝຶກອົບຮົມ: ໂຄງການຈະດຳເນີນການຝຶກອົບຮົມ ທົ່ວປະເທດຢ່າງເປັນຈິງເປັນຈັງ ແລະ ມີວາລະການຝຶກອົບຮົມກັບທີ່ ເພື່ອ ເຜີຍແຜ່ ບັນດາວິທີການ ການຄຸ້ມຄອງ PIP ແບບໃໝ່ ແລະ ພັດທະນາຄວາມສາມາດ ໃຫ້ກັບພະນັກງານ ທີ່ມີສ່ວນຮ່ວມໃນ ການຄຸ້ມຄອງ PIP.

(2) ຄູ່ມື ແລະ ປື້ມຄູ່ມື: ໂຄງການຈະສ້າງວິທີການ ການຄຸ້ມຄອງ PIP ທີ່ທັນກັບສະພາບການໃຫ້ເປັນແບບມາດຕະຖານ ມີຄວາມເໝາະສົມກັບ ສະພາບການປັດຈຸບັນ ຂອງ ສປປ ລາວ, ໂດຍຜ່ານຄູ່ມື ແລະ ປື້ມຄູ່ມື

(3) ກອບກົດໝາຍ: ໂຄງການຈະຊ່ວຍສ້າງຕັ້ງ ກອບກົດໝາຍ ກ່ຽວກັບ ການຄຸ້ມຄອງ PIP ທີ່ມີປະສິດທິພາບ.

【 ການຈັດໃຫ້ເຂົ້າກັນ 】 ໂດຍການຈັດໃຫ້ເຂົ້າກັນ (1) ການຝຶກອົບຮົມ ແລະ (2) ຄູ່ມື ແລະ ປື້ມຄູ່ມື , ພວກເຮົາຕັ້ງໃຈ ທີ່ຈະຮັບປະກັນວ່າ ບັນດາວິທີການ ຄຸ້ມຄອງ PIP ແບບໃໝ່ ຈະກາຍມາເປັນຂັ້ນຕອນ ທີ່ນຳໃຊ້ໂດຍທົ່ວໄປ ສຳລັບພະນັກງານ ທົ່ວປະເທດ

【 ການຈັດໃຫ້ເຂົ້າກັນ 】 ໂດຍການຈັດໃຫ້ເຂົ້າກັນ (2) ຄູ່ມື ແລະ ປື້ມຄູ່ມື ແລະ (3) ກອບກົດໝາຍ, ພວກເຮົາຕັ້ງໃຈ ທີ່ຈະຮັບປະກັນວ່າ ບັນດາວິທີການ ຄຸ້ມຄອງ PIP ແບບໃໝ່ ຈະກາຍມາເປັນຂັ້ນຕອນແບບດຽວກັນ ສຳລັບລັດຖະບານ ສປປ ລາວ

【 ການຈັດໃຫ້ເຂົ້າກັນ 】 ໂດຍການຈັດໃຫ້ເຂົ້າກັນ (3) ກອບກົດໝາຍ ແລະ (1) ການຝຶກອົບຮົມ, ພວກເຮົາຕັ້ງໃຈ ທີ່ຈະຮັບປະກັນວ່າ ກອບກົດໝາຍ ຈະໄດ້ຮັບການແຈ້ງການ ຢ່າງຈະແຈ້ງ ແລະ ປະຕິບັດຕາມຢ່າງຈິງຈັງ ໃນເວລາ ຄຸ້ມຄອງ ບັນດາໂຄງການ ການລົງທຶນຂອງລັດ.

➤ ບັນດາອົງການຈັດຕັ້ງປະຕິບັດ

▪ ບັນດາອົງການຄູ່ຮ່ວມງານ

✧ **ພະແນກປະເມີນຜົນ, ກະຊວງ ແຜນການ ແລະ ການລົງທຶນ (MPI-DOE)** ແມ່ນອົງການຈັດຕັ້ງທີ່ເປັນເຈົ້າການ ໃນການປະເມີນ ແລະ ການປະເມີນຜົນ ບັນດາໂຄງການ PIP ທົ່ວປະເທດ. ຮັບຜິດຊອບ ໃນການໃຫ້ແນວທາງ ແລະ ຂໍ້ແນະນຳ ທາງດ້ານວິຊາການ ທາງດ້ານ ວິທີການ ປະເມີນ ແລະ ປະເມີນຜົນ ຕໍ່ກັບ DPI ແລະ ບັນດາພະແນກ ແຜນການ. ຍັງມີໜ້າທີ່ ໃນການລວບລວມເອົາການສະເໜີ ຂໍງົບປະມານ PIP ປະຈຳປີ ຈາກ ບັນດາພະແນກ ແຜນການ ໃນທົ່ວປະເທດ

- **ພະແນກແຜນການ, ກະຊວງ ແຜນການ ແລະ ການລົງທຶນ (MPI-DOP)** ແມ່ນອົງການຈັດຕັ້ງທີ່ສັງລວມ ການສະເໜີຂໍງົບປະມານ PIP ແລະ ກວດວ່າ ການສະເໜີດັ່ງກ່າວນັ້ນ ສອດຄ່ອງກັບ ແຜນພັດທະນາ ເສດຖະກິດ ສັງຄົມ ແຫ່ງຊາດ ຫຼືບໍ່, ປະສານກັບ ບັນດາຜູ້ມີສ່ວນກ່ຽວຂ້ອງ, ແລະ ຍື່ນບົດສະເໜີໂຄງການ ສຸດທ້າຍ ເພື່ອຮັບຮອງ ໃນກອງປະຊຸມ ລັດຖະມົນຕີ ແລະ ສະພາແຫ່ງຊາດ.

- **ພະແນກຮ່ວມມື ກັບຕ່າງປະເທດ, ກະຊວງ ແຜນການ ແລະ ການລົງທຶນ (MPIDIC)** ແມ່ນອົງການຈັດຕັ້ງທີ່ຮັບຜິດຊອບ ໃນການປະສານງານ ກັບບັນດາໂຄງການ ODA ລະຫວ່າງ ຄູ່ຮ່ວມງານພັດທະນາ ແລະ ອົງການຈັດຕັ້ງຄູ່ຮ່ວມງານລັດຖະບານ. ຍັງມີໜ້າທີ່ເບິ່ງ ງົບປະມານ ປະກອບສ່ວນຂອງລັດ ຕໍ່ກັບບັນດາໂຄງການ ODA.

- ບັນດາຜູ້ຊ່ຽວຊານ ຍີ່ປຸ່ນ
- ຫົວໜ້າທີ່ປຶກສາ/ທີ່ປຶກສາ ທາງດ້ານ ກົດໝາຍ ການລົງທຶນຂອງລັດການຄຸ້ມຄອງທຶນຮອນ
- ຄູ່ຮ່ວມງານ ODA/ການຄຸ້ມຄອງ ແຜນງານ
- ການວາງແຜນງົບປະມານ PIP
- ການຄຸ້ມຄອງ ທາງດ້ານການເງິນ PIP
- ການປະເມີນຜົນ ແບບ Meta/ການພັດທະນາ ການຝຶກອົບຮົມ
- ການປະສານງານ ໂຄງການ

PCAP2 Project Office
Ministry of Planning and Investment, Luang Prabang Road, Vientiane, Lao PDR
Tel/Fax: +856-21-243-687